ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: F0387/26/ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 12 ພຶດສະພາ 2026

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2026, ທີ່ຈັດຂຶ້ນໃນວັນທີ 12 ພຶດສະພາ 2026

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2026, ທີ່ຈັດຂຶ້ນໃນວັນທີ 12 ພຶດສະພາ 2026 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານ ແລະ ບົດລາຍງານທາງການເງິນ 3 ເດືອນຕົ້ນປີ 2026 ສິ້ນສຸດໃນວັນທີ 31 ມີນາ 2026.
2. ຮັບຊາບ ແລະ ອະນຸມັດກຳນົດທິດທາງຂອງບໍລິສັດເພື່ອຮັບມືກັບວິກິດການທາງພູມສາດການເມືອງໃນປະຈຸບັນ
3. ອະນຸມັດງົບປະມານສຳລັບການຈັດງານສະຫຼອງຄົບຮອບ 15 ປີ ຂອງບໍລິສັດ
4. ອະນຸມັດການຈັດຊື້ລົດໄຟຟ້າໃໝ່ ແລະ ຂາຍລົດຄັນເກົ່າຂອງບໍລິສັດ
5. ຮັບຊາບຜົນການດຳເນີນການຂອງບໍລິສັດ ສິ້ນສຸດເດືອນເມສາ 2026
6. ຮັບຊາບກະແສເງິນສົດ ສິ້ນສຸດເດືອນເມສາ 2026 ແລະ ປະມານການກະແສເງິນ 3 ເດືອນຂ້າງໜ້າ
7. ຮັບຊາບຂໍ້ກຳນົດ ແລະ ເງື່ອນໄຂການກູ້ຢືມເງິນຈາກທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL).
8. ຮັບຊາບບົດລາຍງານການຕິດຕາມຄວາມສ່ຽງ ປະຈຳໄຕມາດ 1 ປີ 2026

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ. ມານິບ ຕຣິລິດວິໄລ)